# ບົດທີ 10

# ພະລັກສະນະ ຫຼືຄຸນສົມບັດຂອງພະເຈົ້າ

ໜ້າປົກບົດນີ້ບໍ່ມີຮູບເພາະບົດນີ້ເວົ້າເຖິງພະເຈົ້າ ເຮົາແຕ້ມຮູບຂອງພະເຈົ້າບໍ່ໄດ້ ຍິ່ງກວ່ານັ້ນອີກ ພະເຈົ້າຫ້າມບໍ່ໃຫ້ເຮົາສ້າງຮູບພະເຈົ້າ

**1** ເລື່ອງຂອງຕີເອກອະນຸພາບກໍເຂົ້າໃຈຍາກ ພະເຈົ້າເປັນອົງດຽວທີ່ປະກອບດ້ວຍ 3 ພະພາກ. ພະເຈົ້າສ້າງເຮົາໄວ້ເພາະ ສັນນັ້ນ ພະເຈົ້າເຂົ້າໃຈຄົນເຮົາກໍໄດ້ ແຕ່ພວກເຮົາເຂົ້າໃຈເລື່ອງພະເຈົ້າຢ່າງຄົບຖ້ວນບໍ່ໄດ້. ແຕ່ຈົ່ງຈື່ຈໍາໄວ້ວ່າ ພະເຈົ້າໃນບາງພາສາເຂົາເຄີຍເວົ້າເຖິງ “3 ຄົນ 1 ຕົວ” ຫຼື ພຽງແຕ່ 3-1 ກໍວ່າໄດ້ (ພາສາຈີນ ຫຼື ພາສາເກົາຫຼີ) ຖ້າເຮົາຈະເວົ້າຄວາມພື້ນເມືອງໃນພາສາລາວ ອາດຈະວ່າ “ສາມພາກຮວມເປັນອົງດຽວ” ກໍໄດ້ ໃນຄວາມສັ່ງສອນຂອງພະຄໍາພີ ຕີເອກອະນຸພາບປະກອບດ້ວຍ ຈັກພະພາກ? ______________________
ມີພະເຈົ້າຈັກອົງ? ______________________



**2** ໃນຄວາມທີ່ພະອົງສັ່ງກັບພວກສາວົກໃນ ມັດທາຍ 28:18-20. ພະອົງບອກເຂົາວ່າ ຈົ່ງໄປເຮັດໃຫ້ຄົນທຸກຊາດເປັນ ລູກສິດ ໃຫ້ເຂົາຮັບບັບຕິສະມາໃນພະນາມແຫ່ງ
______________________ ແລະ ______________________
ຄືທັງສາມນັ້ນຮວມເປັນຕີເອກອະ ______________________ . (ຈົ່ງຕື່ມຄວາມທີ່ຂາດ)

**3** ພວກຄຣິສຕຽນທີ່ເຊື່ອໃນຕີເອກອະນຸພາບ ຕັ້ງແຕ່ສະໄໝອັກຄະສາວົກຕໍ່ມາ ຫຼັກຄວາມເຊື່ອຕາມເຫຼົ່າອັກຄະສາວົກກໍ ເນັ້ນວ່າ ພະເຈົ້າເປັນອົງດຽວຊຶ່ງປະກອບດ້ວຍ 3 ພະພາກ. ໃນຄໍາສັ່ງສຸດທ້າຍກ່ອນພະເຢຊູຈະຂຶ້ນສູ່ສະຫວັນ ເປັນ ພື້ນຖານຂອງຫຼັກຄວາມເຊື່ອຕາມເຫຼົ່າອັກຄະສາວົກ. ຄໍາສັ່ງນັ້ນເຫັນໃນ ພະຄໍາພີ ບົດໃດ ຂໍ້ໃດ? ______________________

**4** ຫຼັກຄວາມເຊື່ອນັ້ນຕັ້ງຕົ້ນດ້ວຍ “ຂ້າພະເຈົ້າເຊື່ອໄວ້ວາງໃຈໃນ ______________________
ຜູ້ຊົງ ______________________ ”. (ຈົ່ງຕື່ມຄວາມຂາດໃສ່ບ່ອນວ່າງ)

ຕອບ:

*1* *3 ພະພາກ ອົງດຽວ*

*2* *ພະບິດາ ພະບຸດ ພະວິນຍານບໍລິສຸດ*

*3* *ມທ 28:18-20*

*4* *ພະລາຊະບິດາເຈາ ລິດທານຸພາບສູງສຸດ*

**5** ເຮົາຈະຮຽນພະລັກສະນະຂອງພະເຈົ້າ ເມື່ອພະອົງຊົງສ້າງສິ່ງທັງປວງ ທັງສ້າງມະນຸດດ້ວຍບໍ່ມີວັດສະດຸ ບໍ່ມີອຸປະກອນ *ພະອົງມີລິດທານຸພາບສູງສຸດ.* ໃຫ້ທ່ານອ່ານຈາກພະທຳອົບພະຍົບ 6:3 ພະເຈົ້າໄດ້ປາກົດໃຫ້ ອັບລາຮາມ, ອີຊາກ ແລະ ຢາໂຄບ ເຫັນໃນຖານະໃດ?

______________________________________________________________

**6** ຄັນເຮົາເຫັນວ່າ ພະເຈົ້າເປັນຜູ້ມີອຳນາດຍິ່ງໃຫຍ່ ຫມາຍຄວາມວ່າ ພະເຈົ້າ ______ ມີສ່ວນຈຳກັດ. (ຈົ່ງຕື່ມຄວາມທີ່ຂາດ)

| | |
|---|---|
| ຝຶກ: | ໃຫ້ທ່ານເອົາສໍສີຂຽວຂີດກ້ອງຄຳທີ່ວ່າ "ພະເຈົ້າຜູ້ມີອຳນາດຍິ່ງໃຫຍ່" ໃນ ອພຍ 6:3 ແລ້ວຂຽນຄຳວ່າ "ບໍ່ຈຳກັດ" ໃສ່ຂອບເຈ້ຍໃບນັ້ນ. |

**7** ຄຳວ່າ "ມີອຳນາດຍິ່ງໃຫຍ່" ຫມາຍຄວາມວ່າ ມີລິດທານຸພາບສູງສຸດກໍວ່າໄດ້ ຫຼື ບໍ່ມີທີ່ຈຳກັດກໍວ່າໄດ້ເຫມືອນກັນ. ພະເຈົ້າຈະເຮັດໄດ້ເຖິງຂະຫນາດໃດ? (ໃຫ້ເລືອກເອົາຂໍ້ທີ່ເຫັນວ່າຖືກ)

ກ. ເຮັດໄດ້ຫມົດທຸກຢ່າງ

ຂ. ເຮັດໄດ້ສ່ວນຫຼາຍ

ຄ. ເຮັດໄດ້ປານເທວະດາ

**8** ພະເຈົ້າຊົງສຳແດງລິດອຳນາດສູງສຸດໂດຍການສ້າງຈັກກະວານ ຫຼັກຄວາມເຊື່ອຕາມເຫຼົ່າອັກຄະສາວົກເວົ້າເຊັ່ນດຽວ ກັນວ່າ "ຜູ້ຊົງນິລະມິດສ້າງຟ້າແລະດິນ" ໃຫ້ທ່ານອ່ານຈາກພະທຳ ປະຖົມມະການ 1:1 ມີສິ່ງໃດກ່ອນພະເຈົ້າ ເລີ້ມຕົ້ນສ້າງແຜ່ນດິນ? (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ວັດສະດຸ ຂ. ມີແຕ່ພະເຈົ້າ ຄ. ນ້ຳ

**9** ພະເຈົ້າມີອຳນາດຢ່າງໃດຈຶ່ງສ້າງໂລກໄດ້ດ້ວຍບໍ່ມີວັດສະດຸກ່ອນ? ________________

**10** ໃຫ້ທ່ານອ່ານຂໍ້ພະຄຳພີຕໍ່ໄປນີ້ ແມ່ນຂໍ້ໃດທີ່ເວົ້າເຖິງອຳນາດຂອງພະອົງ? (ຈົ່ງເລືອກຂໍ້ທີ່ຖືກ)

_______ ອພຍ 6:3 _____ ພສສ 139:1-6 _____ ໂຢຮັນ 4:24

**11** ສ່ວນໃນຄວາມເຊື່ອຕາມເຫຼົ່າອັກຄະສາວົກ ກໍວ່າພະບິດາຊົງສ້າງຫຍັງ? _____________
ຊົງມີລິດຫຼາຍປານໃດ? ____________________________________________

ຕອບ:

**5** *ພະເຈາຜູ້ມີອຳນາດຍິ່ງໃຫຍ່*

**6** *ບໍ່*

**7** *ກ.ຖືກ*

**8** *ຂ.ຖືກ*

**9** *ລິດທານຸພາບສູງສຸດ (ອຳນາດຍິ່ງໃຫຍ່ກໍໄດ້)*

**10** *ອພຍ 6:3*

**11** *ນິລະມິດສ້າງຟ້າແລະດິນ ລິດທານຸພາບສູງສຸດ*

**12** ໃນບົດທີ 10 ນີ້ເວົ້າເລື່ອງຄຸນສົມບັດຂອງພະເຈົ້າ ລິດທານຸພາບຂອງພະອົງກໍເປັນຄຸນສົມບັດອັນຫນຶ່ງ. ຄຸນສົມບັດຂອງພະເຈົ້າ ຊຶ່ງພວກເຮົາຫາກໍ່ຮຽນນີ້ຄືຫຍັງ? ________________

**13** "ລິດທານຸພາບສູງສຸດ" ຄືຄຸນສົມບັດປະການຫນຶ່ງຂອງພະເຈົ້າ. ຄຳວ່າ ຄຸນສົມບັດໝາຍເຖິງລັກສະນະຂອງບຸກຄົນ ໃດ ບຸກຄົນຫນຶ່ງ (ແຕ່ລັກສະນະນີ້ບໍ່ແມ່ນ ສູງ ຕໍ່າ ດຳ ຂາວ ເຫມືອນຢ່າງມະນຸດ) ເພາະເຫດນີ້ເມື່ອເຮົາເວົ້າເຖິງ ຄຸນສົມບັດຂອງພະບິດາ ເຮົາອ້າງເຖິງຫຍັງ? (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ກິດຈະການທີ່ພະເຈົ້າກະທຳ

ຂ. ລັກສະນະຂອງພະເຢຊູ

ຄ. ພະລັກສະນະຂອງພະບິດາເຈົ້າ

**14** ຂໍໃຫ້ທ່ານອ່ານຄວາມເວົ້າຕໍ່ໄປນີ້:

ກ. ພະເຈົ້າ ຊົງຮູ້ຫມົດ

ຂ. ພະເຈົ້າ ມີລິດທານຸພາບສູງສຸດ

ຄ. ພະເຈົ້າ ຢູ່ທຸກບ່ອນທຸກທີ່

ງ. ພະເຈົ້າ ເປັນວິນຍານ

ຈ. ພະເຈົ້າ ບໍ່ຈຳກັດ

ສ. ພະເຈົ້າ ຢູ່ຕະຫຼອດສືບໆໄປເປັນນິດ

ຄວາມເວົ້າໃນລາຍຊື່ເຫຼົ່ານີ້ຄື: ຄຸນສົມບັດຂອງພະເຈົ້າ ຄຳເວົ້າ 6 ປະໂຫຍກນັ້ນ ສະແດງເຖິງພະລັກສະນະ ຫຼື ____________________ ຂອງພະເຈົ້າ. (ຈົ່ງຕື່ມຄວາມທີ່ຂາດ)

**15** ໃນລາຍຊື່ນັ້ນແມ່ນຄຸນສົມບັດໃດ ທີ່ເວົ້າເຖິງອຳນາດຍິ່ງໃຫຍ່ຂອງພະອົງ? ____________

ຄຸນສົມບັດອີກປະການຫນຶ່ງຄື: *ພະເຈົ້າຊົງຮູ້ທຸກສິ່ງ*

**16** ມະນຸດເຮົາຈະຮູ້ທຸກສິ່ງເຫມືອນພະເຈົ້າບໍ່ໄດ້ ພະເຈົ້າຊົງສ້າງເຮົາທຸກຄົນໄວ້ ດັ່ງນັ້ນຄວາມສາມາດຂອງມະນຸດຈະບໍ່ປານ ຄວາມສາມາດຂອງພະເຈົ້າ. (ຂໍໃຫ້ທ່ານຂີດຂ້າປະໂຫຍກໃດທີ່ບໍ່ແມ່ນຄວາມຈິງອອກ)

ກ. ຄວາມຮູ້ຂອງມະນຸດຈຳກັດ

ຂ. ຄວາມຮູ້ຂອງພະເຈົ້າບໍ່ຈຳກັດ

ຄ. ຖ້າມະນຸດຮຽນຮູ້ຫຼາຍ ມະນຸດນັ້ນຈະຮູ້ທັງຫມົດໄດ້

ງ. ພະເຈົ້າຊົງຮູ້ຫຼາຍກວ່າມະນຸດ ແຕ່ຍັງມີສ່ວນທີ່ພະອົງເອງຍັງບໍ່ຮູ້

ຕອບ:

***12*** *ລິດທານຸພາບສູງສຸດ*

***13*** *ຄ. ຖືກ*

***14*** *ຄຸນສົມບັດ*

***15*** *ມີລິດທານຸພາບສູງສຸດ*

***16*** *ຂີດຂ້າ ຄ. ແລະ ງ. ອອກ*

**17** ພະບັນຍັດຄັ້ງທີສອງ 29:29 ບອກວ່າ "ສິ່ງຂອງທັງຫຼາຍທີ່ເຊື່ອງໄວ້ເປັນຂອງພະຜູ້ເປັນເຈົ້າຂອງເຮົາ ແລະສິ່ງຂອງ ທັງຫຼາຍທີ່ໄດ້ປາກົດແຈ້ງແລ້ວເປັນຂອງພວກເຮົາກັບລູກທັງຫຼາຍຂອງເຮົາສືບໆ ໄປເປັນນິດ ເພື່ອພວກເຮົາຈະໄດ້ຂັບ ຕາມຄຳທັງປວງແຫ່ງພະບັນຍັດນີ້".

ກ. ສິ່ງທັງຫຼາຍທີ່ເຊື່ອງໄວ້ເປັນຂອງໃຜ? ________________________________

ຂ. ສິ່ງທັງຫຼາຍທີ່ປາກົດແຈ້ງເປັນຂອງໃຜ? ________________________________

**18** ພະເຈົ້າຊົງຮູ້ທຸກສິ່ງທຸກຢ່າງເຖິງວ່າ ຈະແມ່ນສິ່ງທີ່ເຊື່ອງໄວ້ຈາກມະນຸດກໍຕາມ ແມ່ນແຕ່ພະເຈົ້າທີ່ຈະສະແດງສິ່ງເຫຼົ່າ ນັ້ນໃຫ້ປະກົດແຈ້ງຕໍ່ມະນຸດ. ຖ້າພະເຈົ້າບໍ່ສະແດງຕົວເອງໃຫ້ມະນຸດແລ້ວມະນຸດຈະບໍ່ສາມາດຮູ້ເລື່ອງຂອງພະເຈົ້າ. ພະຄຳພີບອກວ່າ ພະເຈົ້າຊົງຮູ້ທຸກສິ່ງທີ່ເຊື່ອງໄວ້ຈາກມະນຸດ ແມ່ນໃນບົດໃດ ຂໍ້ໃດ? ____________________________________

**19** ມະນຸດໄດ້ສຶກສາເລື່ອງຂອງໂລກນີ້ມາໄດ້ຫຼາຍຮ້ອຍປີແລ້ວ ແຕ່ວ່າຍັງບໍ່ຮູ້ຫມົດເທື່ອ. ເຂົາຮູ້ເລື່ອງຈັກກະວານແດ່ ເລື່ອງວິທະຍາສາດແດ່ ເລື່ອງມະນຸດສາດຫຼາຍຕໍ່ຫຼາຍ ແຕ່ບໍ່ຮູ້ຫມົດເທື່ອ ແຕ່ພະເຈົ້າຊົງຮູ້ຫມົດຕັ້ງແຕ່ກົກເຄົ້າມາ.

ກ. ສິ່ງໃດທີ່ເຊື່ອງໄວ້ໃນປ່າດົງພະເຈົ້າເຫັນຮູ້ຫມົດບໍ່? ________________________

ຂ. ກ່ອນທີ່ນັກບິນອາວະກາດບໍ່ໄດ້ຢຽບດວງຈັນນັ້ນ ພະເຈົ້າກໍຍັງຮູ້ວ່າພື້ນຫນ້າດິນນັ້ນເປັນຢ່າງໃດບໍ່? ____________________________________________________

**20** ແມ່ນແທ້! ພະເຈົ້າຮູ້ແນ່ນອນ ເພາະພະເຈົ້າເປັນຜູ້ແຕ່ງໄວ້. ພະເຈົ້າຮູ້ທັງຫມົດ, ມະນຸດເຮົາຮູ້ແຕ່ບາງປະການ ແລະປະການທີ່ຮູ້ກໍຮູ້ແຕ່ສ່ວນຫນ້ອຍ. ສ່ວນມະນຸດເຮົາສາມາດຮູ້ໄດ້ ກໍຮູ້ໄດ້ເພາະພະເຈົ້າເປີດເຜີຍໃຫ້. ໃນຂໍ້ພະຄຳພີທີ່ເວົ້າເຖິງສິ່ງທີ່ພະເຈົ້າເຊື່ອງໄວ້ ແລະສິ່ງທີ່ປາກົດແຈ້ງຢູ່ໃນບົດໃດ ຂໍ້ໃດ? ____________________________________________

**21** ໃນສອງຕອນພະຄຳພີນີ້ ແມ່ນຕອນໃດສອນວ່າ ພະເຈົ້າຮູ້ຫມົດ? (ຈົ່ງເລືອກເອົາຂໍ້ທີ່ຖືກ)

______ ພສສ 139:1-6 ______ ເຮັບເລີ 4:13

**22** ໃນພສສ 139:6 ບອກວ່າ ຄວາມຮູ້ຂອງພະອົງ ______________ . (ຕື່ມຄວາມທີ່ຂາດ)

ຕອບ:

***17*** *ກ. ພະຜູ້ເປັນເຈາ ຂ. ພວກເຮົາ*

***18*** *ພະບັນຍັດສອງ 29:29*

***19*** *ກ. ຮູ້ ຂ. ຮູ້*

***20*** *ພະບັນຍັດສອງ 29:29*

***21*** *ພສສ 139:1-6*

***22*** *ມີເຫຼືອຫລາຍ*

**23** ໃນບົດຮຽນນີ້ເຮົາຈະຮຽນຮູ້ເລື່ອງຄຸນສົມບັດຂອງພະເຈົ້າ 6 ປະການ. ໃນລາຍຊື່ 6 ປະການຕໍ່ໄປນີ້ເຮົາໄດ້ຮຽນຮູ້ ເລື່ອງ 2 ປະການໃດມາແລ້ວ?
(ໃຫ້ຫມາຍ √ ໃສ່ຂໍ້ທີ່ຖືກ ແລະ X ໃສ່ຫນ້າຂໍ້ທີ່ບໍ່ທັນໄດ້ຮຽນຮູ້ເທື່ອ)

_______ ພະເຈົ້າ ຊົງຮູ້ຫມົດ _______ ພະເຈົ້າ ມີລິດທານຸພາບສູງສຸດ
_______ ພະເຈົ້າ ເປັນພະວິນຍານ _______ ພະເຈົ້າ ຢູ່ທຸກບ່ອນທຸກທີ່
_______ ພະເຈົ້າ ບໍ່ຈຳກັດ _______ ພະເຈົ້າ ຢູ່ຕະຫລອດສືບໆ ໄປເປັນນິດ

**24** ບໍ່ແມ່ນພຽງແຕ່ພະເຈົ້າຮູ້ທຸກໆ ສິ່ງ ແຕ່ພະເຈົ້າຮູ້ທຸກໆ ຄົນເຫມືອນກັນ.
ຖ້າພະເຈົ້າຮູ້ດັ່ງນັ້ນແປວ່າ: *ພະເຈົ້າຢູ່ທຸກບ່ອນທຸກທີ່ ດ້ວຍ.* (ອ່ານ ພສສ 139:7-12)

ກ. ແມ່ນໃຜ ຢູ່ສະຫວັນຊັ້ນຟ້າ? ________________________________________
ຂ. ແມ່ນໃຜ ຢູ່ທິດຕາເວັນອອກ? ________________________________________
ຄ. ແມ່ນໃຜຢູ່ສຸດຕາເວັນຕົກ? ________________________________________

**25** ເຮົາຫນີຈາກພະເຈົ້າບໍ່ໄດ້ ເພາະພະອົງຢູ່ ____________________. (ຕື່ມຄວາມທີ່ຂາດ)

**26** ຄຸນສົມບັດຂອງພະເຈົ້າທີ່ເຮົາໄດ້ຮຽນມາແລ້ວຄື: ພະເຈົ້າມີລິດທານຸພາບສູງສຸດ.
ພະເຈົ້າຊົງຮູ້ຫມົດ ແລະຢູ່ໃສອີກ? ________________________________________

**27** ໃຫ້ທ່ານເປີດເບິ່ງ ພສສ 139:1-12 ອີກ.

ກ. ແມ່ນຂໍ້ໃດ ທີ່ເວົ້າເຖິງພະເຈົ້າຮູ້ຫມົດ? ________________________________
ຂ. ທີ່ພະເຈົ້າມີລິດທານຸພາບສູງສຸດ ເຫັນແຕ່ຂໍ້ໃດ ໄປຫາຂໍ້ໃດ? __________________

| | |
|---|---|
| ຝຶກ: | ໃຫ້ທ່ານເອົາສໍສີຂຽວຂີດກ້ອງຄຳວ່າ "ຮູ້ຈັກ" ໃນ ພສສ 139:1 ແລະຂີດກ້ອງຄຳວ່າ "ພະພັກຂອງພະອົງ" ໃນ ຂໍ້ 7 ດ້ວຍ. |

**28** ໃນເຢເລມີຢາ 23:24 ຄຳວ່າ "ເຮົາແມ່ນຜູ້ຢູ່ໃນຟ້າທັງຫຼາຍ ແລະໃນແຜ່ນດິນໂລກເຕັມທົ່ວໄປ ບໍ່ແມ່ນຫຼື" ອ້າງເຖິງຄຸນສົມບັດໃດ? ________________________________

ຕອບ:

***23*** *ພະເຈາຊົງຮູ້ຫມົດ ພະເຈາມີລິດທານຸພາບສູງສຸດ*

***24*** *ກ. ພະເຈາ ຂ. ພະເຈາ ຄ. ພະເຈາ*

***25*** *ທຸກບ່ອນທຸກທີ່*

***26*** *ພະເຈາຢູ່ທຸກບ່ອນທຸກທີ່*

***27*** *ກ. ຂໍ້ 1-6 ຂ. ຂໍ້ 7-12*

***28*** *ການທີ່ພະເຈາຢູ່ທຸກບ່ອນທຸກທີ່*

**29** ມາເຖິງປັດຈຸບັນນີ້ເຮົາໄດ້ຮຽນເລື່ອງຄຸນສົມບັດຂອງພະເຈົ້າ 3 ປະການ. ຖ້າເຮົາຈະອະທິບາຍວ່າ ພະເຈົ້າເປັນ ຢ່າງໃດ ເຮົາຈະເວົ້າເຖິງລັກສະນະຂອງພະເຈົ້າ ຫຼື _______________ ຂອງພະເຈົ້າກໍໄດ້. (ຕື່ມຄວາມທີ່ຂາດ)

**30** ໃນຊ່ອງວ່າງຕໍ່ໄປນີ້ ໃຫ້ທ່ານຂຽນຄຸນສົມບັດຂອງພະເຈົ້າ ທີ່ເຮົາໄດ້ສຶກສາມາແລ້ວ.

_______________________________________________

_______________________________________________

_______________________________________________

**31** ຄຸນສົມບັດອີກປະການຫນຶ່ງຄື: ພະເຈົ້າບໍ່ມີເວລາຕັ້ງຕົ້ນແລະບໍ່ມີເວລາສິ້ນສຸດ. ເຮົາຈຶ່ງຈະເວົ້າໄດ້ວ່າ: *ພະເຈົ້າຢູ່ຕະຫຼອດໄປເປັນນິດ* ໃນຄຳເວົ້າສອງປະໂຫຍກຕໍ່ໄປນີ້ ຖ້າມີປະໂຫຍກໃດບໍ່ຈິງໃຫ້ທ່ານຂີດຂ້າອອກ.

ກ. ບໍ່ມີວັນເວລາໃດ ທີ່ພະເຈົ້າຈະບໍ່ຢູ່ຈັກເທື່ອ

ຂ. ບໍ່ມີວັນເວລາ ທີ່ພະເຈົ້າຈະສິ້ນສຸດໄປ

ຄ. ພະເຈົ້າມີເວລາເລີ້ມຕົ້ນ ແຕ່ບໍ່ມີເວລາສິ້ນສຸດ

**32** ເຮົາເຊື່ອວ່າ ພະເຈົ້າຊົງຢູ່ຕະຫຼອດໄປຫມາຍຄວາມວ່າຢ່າງໃດ?
(ໃຫ້ຫມາຍເອົາຂໍ້ທີ່ເຫັນວ່າຖືກ)

ກ. ພະເຈົ້າເລີ້ມຕົ້ນກ່ອນຈະນິລະມິດສ້າງໂລກ

ຂ. ຈະມີເວລາສິ້ນສຸດຫຼັງຈາກພິພາກສາໂລກ

ຄ. ບໍ່ມີເວລາເລີ້ມຕົ້ນບໍ່ມີເວລາສິ້ນສຸດລົງ

**33** ໃຫ້ທ່ານອ່ານ ພສສ 90:2 ຂໍ້ນີ້ເວົ້າເຖິງຄຸນສົມບັດໃດ? (ໃຫ້ຫມາຍເອົາຂໍ້ທີ່ຖືກ)

1. ພະອົງຊົງຮູ້ຫມົດ 2. ພະອົງຢູ່ທຸກບ່ອນ 3. ພະອົງຢູ່ຕະຫຼອດໄປ

| | |
|---|---|
| ຝຶກ: | ໃຫ້ທ່ານເອົາສໍສີຂຽວຂີດກ້ອງຕະຫຼອດຂໍ້ ພສສ 90:2 |

**34** ຄຳວ່າ "ບໍ່ມີກົກແລະບໍ່ມີປາຍ" ອ້າງເຖິງຄຸນສົມບັດໃດ? _______________

**35** ຄັນພະເຈົ້າ ບໍ່ມີເວລາເລີ້ມຕົ້ນແລະບໍ່ມີເວລາສິ້ນສຸດ ພະອົງຢູ່ຢ່າງໃດ? __________

ຕອບ:

***29*** *ຄຸນສົມບັດ*

***30*** *ພະເຈາ ມີລິດທານຸພາບສູງສຸດ ພະເຈາ ຊົງຮູ້ຫມົດ*

***31*** *ຂີດຂ້າແຕ່ຂໍ້ ຄ. ພະເຈາ ຢູ່ທຸກບ່ອນທຸກທີ່*

***32*** *ຄ.ຖືກ*

***33*** *3.ຖືກ*

***34*** *ພະເຈາຊົງຢູ່ຕະຫລອດໄປ*

***35*** *ຢູ່ຕະຫລອດໄປ*

**36** ໃນຄຳເວົ້າຕໍ່ໄປນີ້ ປະໂຫຍກໃດທີ່ບໍ່ແມ່ນຄວາມຈິງໃຫ້ທ່ານຂີດຂ້າອອກ.

ກ. ພະເຈົ້າຢູ່ຕະຫຼອດໄປ

ຂ. ພະເຈົ້າຮູ້ແຕ່ບາງຢ່າງ

ຄ. ມີມະນຸດບາງຄົນທີ່ຮູ້ໝົດ

ງ. ພະເຈົ້າຊົງຮູ້ທັງໝົດ

ຈ. ມີບາງເວລາທີ່ພະເຈົ້າຂາດບໍ່ຮູ້ໝົດ

ສ. ມະນຸດຢູ່ທຸກບ່ອນທຸກທີ່ໄດ້

ຊ. ພະເຈົ້າຢູ່ທຸກບ່ອນທຸກທີ່

ຍ. ມະນຸດອາດຈະເດີນທາງເຖິງທຸກບ່ອນໃນໂລກເວລາດຽວໄດ້

ດ. ມະນຸດບິນໄປຜູ້ດຽວໃນອະວະກາດໄດ້

ຕ. ພະເຈົ້າຮູ້ເລື່ອງອາວະກາດ ເລື່ອງດວງຈັນ ເລື່ອງຕາເວັນໝົດ.

**37** ບາດນີ້ເຮົາຈະປຽບທຽບວ່າ ມະນຸດກັບພະເຈົ້າແຕກຕ່າງກັນຢ່າງໃດ?

ກ. ມະນຸດຢູ່ແຕ່ຊົ່ວຄາວ ແຕ່ ພະເຈົ້າ ຊົງຢູ່ ____________________

ຂ. ມະນຸດຮູ້ແຕ່ບາງປະການ ແຕ່ ພະເຈົ້າ ຊົງ ____________________

ຄ. ມະນຸດຢູ່ໄດ້ແຕ່ບ່ອນດຽວ ແຕ່ ພະເຈົ້າ ຊົງ ____________________

ງ. ມະນຸດມີອຳນາດໜ້ອຍດຽວ ແຕ່ ພະເຈົ້າ ____________________

**38** ເມື່ອເຮົາຈະປຽບທຽບວ່າມະນຸດກັບພະເຈົ້າແຕກຕ່າງກັນ ເຮົາອາດຈະຄົ້ນພົບຄຸນສົມບັດຂອງພະເຈົ້າ ອີກປະການໜຶ່ງ ຄືວ່າມະນຸດເຮົາຈຳກັດ ຫຼືມີຂອບເຂດ ແຕ່ພະເຈົ້າບໍ່ມີຂອບເຂດເຮົາຈຶ່ງເວົ້າວ່າພະເຈົ້າບໍ່ຈຳກັດ. (ຕື່ມຄວາມທີ່ຂາດ)

ກ. ຜູ້ມີຂອບເຂດກໍເປັນຄົນທີ່ມີຄວາມ ____________________

ຂ. ຜູ້ບໍ່ມີຂອບເຂດແມ່ນພະເຈົ້າ ເປັນຢ່າງໃດ? ____________________

**39** ມະນຸດເຮົານີ້ຮູ້ຈັກຄວາມຈຳກັດຫຼາຍປະການ ມະນຸດມີຂອບເຂດດ້ານເວລາຈຶ່ງເວົ້າໄດ້ວ່າ ບໍ່ຢູ່ຕະຫຼອດໄປ. (ຈົ່ງຕື່ມຄວາມທີ່ຂາດ)

ກ. ມະນຸດມີຂອບເຂດດ້ານຄວາມຮູ້ຈຶ່ງເວົ້າໄດ້ວ່າບໍ່ ____________________

ຂ. ມະນຸດມີຂອບເຂດດ້ານທີ່ຢູ່ຈຶ່ງເວົ້າໄດ້ວ່າບໍ່ ____________________

ຄ. ມະນຸດມີຂອບເຂດດ້ານອຳນາດຈຶ່ງເວົ້າໄດ້ວ່າບໍ່ ____________________

ຕອບ:

***36*** *ຂີດຂ້າ ຂ. ຄ. ຈ. ສ. ຍ. ແລະ ດ.*

***37*** *ກ. ຕະຫລອດໄປ ຂ. ຮູ້ທັງໝົດ ຄ. ຢູ່ທຸກບ່ອນທຸກທີ່ ງ. ມີລິດທານຸພາບສູງສຸດ*

***38*** *ກ. ຈຳກັດ ຂ. ບໍ່ຈຳກັດ*

***39*** *ກ. ຮູ້ທັງໝົດ ຂ. ຢູ່ທຸກບ່ອນທຸກທີ່ ຄ. ມີລິດທານຸພາບສູງສຸດ*

**40** ແຕ່ພະເຈົ້າ ແມ່ນກົງກັນຂ້າມກັບມະນຸດ

ກ. ດ້ານຄວາມຮູ້ ພະເຈົ້າເປັນຢ່າງໃດ? ________________________________

ຂ. ດ້ານອຳນາດ ພະເຈົ້າເປັນຢ່າງໃດ? ________________________________

ຄ. ດ້ານທີ່ຢູ່ ພະເຈົ້າເປັນຢ່າງໃດ? ________________________________

ງ. ດ້ານວັນເວລາ ພະເຈົ້າເປັນຢ່າງໃດ? ________________________________

*ເທື່ອໃດທີ່ເຮົາຮຽນຮູ້ເລື່ອງຂອງພະເຈົ້າ ເຮົາຕ້ອງສັງເກດຮູ້ວ່າມະນຸດເຮົາຈຳກັດແຕ່ພະເຈົ້າບໍ່ຈຳກັດ ການຮຽນເລື່ອງ ຕີເອກອະນຸພາບຄືວ່າມີ 3 ພະພາກໃນພະເຈົ້າອົງດຽວ ເຂົ້າໃຈຍາກເພາະເລື່ອງຂອງພະເຈົ້າເປັນເລື່ອງບໍ່ຈຳກັດ ແຕ່ ແຕ່ຄວາມເຂົ້າໃຈຂອງມະນຸດເຮົາຈຳກັດ. ຄວາມສາມາດຂອງມະນຸດບໍ່ເຖິງທີ່ຈະເຂົ້າໃຈເລື່ອງຂອງພະເຈົ້າຫມົດ.*

**41** ຖ້າເຮົາຈະເອົາຈອກມາຕັກນ້ຳອອກຈາກແມ່ນ້ຳຂອງໃຫ້ຫມົດຈະພຽງພໍບໍ່? ____________

ຖ້າເຮົາຈະເຂົ້າໃຈເລື່ອງພະເຈົ້າທັງຫມົດຄວາມຄິດຂອງເຮົາພຽງພໍບໍ່? ____________

**42** ຍັງບໍ່ພໍເທື່ອ! ທີ່ເຮົາເຂົ້າໃຈເລື່ອງຕີເອກອະນຸພາບບໍ່ຫມົດ ກໍເປັນການທຳມະດາຢູ່ແລ້ວ. ຖ້າວ່າເຂົ້າໃຈເລື່ອງຂອງ ພະເຈົ້າຜູ້ບໍ່ມີຂອບເຂດຈຳກັດ ເຮົາຈະຕ້ອງໃຫ້ມີພະເຈົ້າທີ່ມີຄວາມຮູ້ຄວາມສາມາດຫນ້ອຍເຫມືອນເຮົາ. ຈະເອົານ້ຳຫຼາຍປານໃດ ໃສ່ໄວ້ໃນແກ້ວຂະຫນາດ 1 ລິດໄດ້? (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ນ້ຳທັງຫມົດໃນແມ່ນ້ຳຂອງ

ຂ. ເອົາແຕ່ເຄິ່ງຫນຶ່ງຂອງແມ່ນ້ຳຂອງ

ຄ. ແຕ່ລິດດຽວ

**43** ຜູ້ໃດກໍຕາມຮູ້ວ່າຈະເອົານ້ຳທັງຫມົດຈາກແມ່ນ້ຳຂອງໃສ່ໄວ້ໃນແກ້ວລິດບໍ່ໄດ້. ເຊັ່ນດຽວກັນຄວາມຄິດຂອງມະນຸດເຮົາ ບໍ່ພໍທີ່ຈະເຂົ້າໃຈເລື່ອງຕີເອກອະນຸພາບ ຫຼືຢ່າງອື່ນໆ ຫຼາຍປະການກ່ຽວກັບພະເຈົ້າ ເຮົາເຂົ້າໃຈເລື່ອງຂອງພະເຈົ້າ ຢ່າງຄົບຖ້ວນບໍ່ໄດ້ເພາະເຫດໃດ? (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ເພາະເລື່ອງເຫຼົ່ານັ້ນບໍ່ຈິງ

ຂ. ເພາະພະເຈົ້າໃຫຍ່ແລະມະນຸດເຮົານ້ອຍ ຄວາມສາມາດຂອງເຮົາຈຶ່ງບໍ່ພໍທີ່ຈະເຂົ້າໃຈໄດ້.

ຄ. ເພາະພະເຈົ້າບໍ່ໄດ້ສະແດງຕົວໃຫ້ມະນຸດຮູ້

ຕອບ:

***40*** *ກ. ຮູ້ທັງຫມົດ ຂ. ມີລິດທານຸພາບສູງສຸດ ຄ. ຢູ່ທຸກບ່ອນທຸກທີ່*
*ງ. ຢູ່ຕະຫລອດໄປ*

***41*** *ບໍ່ / ບໍ່*

***42*** *ຄ. ຖືກ*

***43*** *ຂ. ຖືກ*

**44** ກ. ພະເຈົ້າຊົງສ້າງມະນຸດ ເພາະ ____________________ ທີ່ບໍ່ຈຳກັດ.
ຂ. ແຕ່ມະນຸດເຮົາ _____________ .

**45** ໃຫ້ທ່ານໝາຍ √ ໃສ່ຂໍ້ໃດທີ່ເປັນຄຸນສົມບັດ ແລະໝາຍ X ໃສ່ສ່ວນໃດທີ່ບໍ່ເປັນຄຸນສົມບັດ.

______ ກ. ພະເຈົ້າມີລິດທານຸພາບສູງສຸດ ______ ຈ. ພະເຈົ້າຢູ່ທຸກບ່ອນທຸກທີ່
______ ຂ. ພະເຈົ້າໃຫ້ເຮົາລອດຈາກບາບ ______ ສ. ພະເຈົ້າຮູ້ທັງໝົດ
______ ຄ. ພະເຈົ້າຢູ່ຕະຫຼອດໄປ ______ ຊ. ພະເຈົ້າບໍ່ຈຳກັດ
______ ງ. ພະເຈົ້າສະແດງຕົວໃຫ້ມະນຸດຮູ້ ______ ຍ. ພະເຈົ້າມີຂອບເຂດ

**46** ມະນຸດຈຳກັດໃນທຸກປະການ, ຈຳກັດໃນຄວາມຮູ້ ເພາະມະນຸດຮູ້ໄດ້ແຕ່ສະເພາະສິ່ງທີ່ພະເຈົ້າຈະເປີດເຜີຍໃຫ້. ແຕ່ ມະນຸດຈຳກັດໃນດ້ານວັນເວລາແລະທີ່ຢູ່ ເພາະພະເຈົ້າສ້າງໃຫ້ເຮົາມີຮ່າງກາຍ ແຕ່ພະເຈົ້າບໍ່ໄດ້ຢູ່ໃນສະພາບຮ່າງ ກາຍ. (ຈົ່ງຕື່ມຄວາມທີ່ຂາດ)
ອ່ານ ໂຢຮັນ 4:24 "ພະເຈົ້າຊົງເປັນພະ ____________________"

**47** ມະນຸດເຮົາປະກອບດ້ວຍວິນຍານ ຈິດໃຈ ແລະ ກາຍ ແຕ່ພະເຈົ້າເປັນສ່ວນໃດ? ________

| | |
|---|---|
| ຝຶກ: | ໃຫ້ທ່ານເອົາສໍສີຂຽວຂີດກ້ອງຄຳ "ພະເຈົ້າຊົງເປັນພະວິນຍານ" ໃນ ໂຢຮັນ 4:24 |

**48** ໃນໂຢຮັນ 4:24 ບອກວ່າ ພະເຈົ້າຊົງເປັນ ____________________ (ຈົ່ງຕື່ມຄວາມທີ່ຂາດ)

**49** ແມ່ນຄວາມຈິງທີ່ວ່າພະຄຳພີເວົ້າເຖິງ "ພະຫັດຂອງພະເຈົ້າ" ທັງພະກອນ ພະບາດ ພະເນດ ໆ ລໆ ແຕ່ຄຳເຫຼົ່າ ນັ້ນເປັນຄວາມປຽບທຽບ ເພາະພະເຈົ້າຊົງເປັນ ____________________ (ຈົ່ງຕື່ມຄວາມທີ່ຂາດ)

ຕອບ:

*44* *ກ. ພະອົງຜູ້ມີລິດເດດ ຂ. ຈຳກັດ*

*45* *ກ. ຄ. ຈ. ສ. ແລະ ຊ.ຖືກ*

*46* *ວິນຍານ*

*47* *ພະວິນຍານ*

*48* *ພະວິນຍານ*

*49* *ພະວິນຍານ*

**50** ພະເຈົ້າໃຊ້ຄວາມເຫຼົ່ານັ້ນເພາະພະອົງສະແດງກິດຈະການຂອງພະອົງ ແລ້ວພະອົງຈະໃຊ້ຄວາມທີ່ມະນຸດເຂົ້າໃຈໄດ້ດີ. ເມື່ອເຮົາອ່ານເລື່ອງພະສຸລະສຽງຂອງພະເຈົ້າ ເຮົາຮູ້ວ່າພະເຈົ້າມີເລື່ອງທີ່ຢາກບອກໃຫ້ເຮົາຮູ້. ເມື່ອເຮົາອ່ານພະ ຄຳພີທີ່ເວົ້າເຖິງສ່ວນໃນພະກາຍຂອງພະເຈົ້າມີຄວາມຫມາຍຢ່າງໃດ? (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ພະເຈົ້າມີຮ່າງກາຍເຫມືອນພວກເຮົາ

ຂ. ພະເຈົ້າເປັນວິນຍານ ແຕ່ພະອົງເຫັນເຮົາໄດ້ ຟັງຄວາມອ້ອນວອນກໍໄດ້ ປາກກັບເຮົາໄດ້ ຊ່ອຍເຮົາໄດ້ ໆລໆ

ຄ. ພະອົງມີກາຍສະຫວ່າງຫຼາຍ

**51** ໃນຊ່ອງວ່າງຕໍ່ໄປນີ້ໃຫ້ທ່ານຂຽນຄຳ "ພະເຈົ້າ" ຫຼື "ມະນຸດ" ໃສ່ຫນ້າປະໂຫຍກທີ່ຖືກຕ້ອງກັນ.

ກ. __________ ເປັນພະວິນຍານ

ຂ. __________ ມີສ່ວນຫນຶ່ງເປັນວິນຍານ

ຄ. __________ ຖືກຈຳກັດ

ງ. __________ ບໍ່ຈຳກັດ

ຈ. __________ ປະກອບດ້ວຍ ກາຍ ຈິດໃຈ ແລະ ວິນຍານ

**52** ມະນຸດເຮົາຈຳກັດເພາະເຮົາປະກອບດ້ວຍ ກາຍ ຈິດໃຈ ແລະ ວິນຍານ ແຕ່ວ່າພະເຈົ້າບໍ່ຈຳກັດເພາະພະອົງເປັນ ພຽງ __________________________ (ຈົ່ງຕື່ມຄວາມທີ່ຂາດ)

**53** ໃນລາຍຊື່ຕໍ່ໄປນີ້ ໃຫ້ທ່ານຂຽນຄຸນສົມບັດຂອງພະເຈົ້າທີ່ສະແດງອອກມາໃນຕອນພະຄຳພີນັ້ນ.

ຄຸນສົມບັດເຫຼົ່ານັ້ນຄື: <u>ພະເຈົ້າຢູ່ທຸກບ່ອນທຸກທີ່</u> <u>ພະເຈົ້າຮູ້ທັງຫມົດ</u>

<u>ພະເຈົ້າມີລິດທານຸພາບສູງສຸດ</u> <u>ພະເຈົ້າເປັນວິນຍານ</u> <u>ພະເຈົ້າຢູ່ຕະຫຼອດໄປ</u>

ພສສ 139:1-6 ________________________________________________

ພສສ 139:7-12 ________________________________________________

ອພຍ 6:3 ________________________________________________

ພສສ 90:2 ________________________________________________

ໂຢຮັນ 4:24 ________________________________________________

ຕອບ:

**50** *ຂ.ຖືກ*

**51** *ກ. ພະເຈາ ຂ. ມະນຸດ ຄ. ມະນຸດ ງ. ພະເຈາ ຈ. ມະນຸດ*

**52** *ວິນຍານ*

**53** *ພສສ 139:1-6 ພະເຈາຊົງຮູ້ທຫມົດ ພສສ 139:7-12 ພະເຈາຢູ່ທຸກບ່ອນທຸກທີ່*
*ອພຍ 6:3 ພະເຈາມີລິດທານຸພາບສູງສຸດ ພສສ 90:2 ພະເຈາຢູ່ຕະຫລອດໄປ*
*ໂຢຮັນ 4:24 ພະເຈາເປັນພະວິນຍານ*

**54** ຄຳສຸດທ້າຍໃນ ມັດທາຍ 5:48 ບອກວ່າ ພະບິດາເຈົ້າເປັນຢ່າງໃດ? ________________

**55** ກ. ຄຸນສົມບັດຂອງພະເຈົ້າອີກປະການໜຶ່ງກໍຄື: *ເປັນຜູ້ດີທີ່ສຸດ* (ຈົ່ງຕື່ມຄວາມທີ່ຂາດ) ສິ່ງໃດທີ່ສົມບູນ ແລະສິ່ງໃດທີ່ບໍລິບູນມາຈາກພະອົງທັງໝົດເພາະມີແຕ່ ພະເຈົ້າເປັນຜູ້ດີ _______

ຂ. ໃຫ້ອ່ານ ຢາໂກໂບ 1:17 ການປະທານອັນດີທຸກຢ່າງແລະຂອງປະທານອັນເລີດທຸກຢ່າງຍ່ອມມາແຕ່ເທິງ ແລະ ລົງມາຈາກໃຜ? ________________________________

**56** ເທື່ອໃດທີ່ເຮົາເວົ້າເຖິງຄວາມດີທີ່ສຸດຂອງພະເຈົ້າ ມີຄວາມໝາຍວ່າ ພະອົງສົມບູນ ແລະຜິດບໍ່ໄດ້ໃນທຸກປະການ ບໍ່ ແມ່ນແຕ່ພະອົງໃຫຍ່ກວ່າທຸກສິ່ງທຸກຢ່າງເທົ່ານັ້ນ ແຕ່ພະອົງກໍດີກວ່າທຸກສິ່ງທຸກຢ່າງດ້ວຍ. ການກະທຳຂອງພະເຈົ້າກໍ ຜິດບໍ່ໄດ້ອີກດ້ວຍ. (ຈົ່ງຕື່ມຄວາມທີ່ຂາດ)

ກ. ຄຳວ່າພະອົງດີທີ່ສຸດໝາຍຄວາມວ່າ ພະອົງຊົງ _________ ທີ່ສຸດ.

ຂ. ຄຳວ່າພະອົງດີທີ່ສຸດໝາຍຄວາມວ່າ ພະອົງ _________ ບໍ່ໄດ້.

**57** ໃຫ້ທ່ານເປີດອ່ານຂໍ້ພະຄຳພີດັ່ງຕໍ່ໄປນີ້ ແລ້ວຂຽນຄວາມທີ່ຂາດໃນຊ່ອງວ່າງ.

ກ. I ໂຢຮັນ 1:5 ພະເຈົ້າຊົງເປັນຄວາມ ____________ ໃນພະອົງບໍ່ມີຄວາມ _______ ເລີຍ.

ຂ. I ໂຢຮັນ 4:8 ພະເຈົ້າຊົງເປັນຄວາມ ________________________________

ຄ. ພະບັນຍັດຄັ້ງທີ ສອງ 32:4 ທາງທັງຫຼາຍຂອງພະອົງກໍ ______________ ແລະຖືກຕ້ອງ.

ງ. ພສສ 119:137 ພະອົງຊົງ ________________________________________

ຈ. 1 ຊມອ 2:2 ບໍ່ມີຜູ້ໃດ ______________________ ດັ່ງພະຜູ້ເປັນເຈົ້າ.

ສ. ພສສ 25:8 ພະຜູ້ເປັນເຈົ້າຊົງສັດຊື່ແລະ ________________________________

**58** ສະຫຼຸບຄວາມວ່າ ຄຸນສົມບັດຂອງພະເຈົ້າມີດັ່ງຕໍ່ໄປນີ້: (ຈົ່ງຕື່ມຄວາມທີ່ຂາດ)

ກ. ພະອົງຊົງຮູ້ __________________

ຂ. ພະອົງຢູ່ທຸກ __________________

ຄ. ພະອົງມີລິດ __________________

ງ. ພະອົງຊົງເປັນວິນ ______________

ຈ. ພະອົງຢູ່ຕະ ______________________

ສ. ພະອົງບໍ່ ______________________

ຊ. ພະອົງເປັນຜູ້ _________________ ທີ່ສຸດ

*ຢ່າລືມບົດເສັງ*

ຕອບ:

**54** *ຜູ້ດີທີ່ສຸດ*

**55** *ກ. ທີ່ສຸດ ຂ. ພະເຈາ*

**56** *ກ. ສົມບູນ ຂ. ຜິດ*

**57** *ກ. ສະຫວ່າງ...ມືດ ຂ. ຮັກ ຄ. ສົມບູນ ງ. ຍຸດຕິທຳ ຈ. ບໍລິສຸດ ສ. ດີ*

**58** *ກ. ທັງໝົດ ຂ. ບ່ອນທຸກທີ່ ຄ. ທານຸພາບສູງສຸດ ງ. ວິນຍານ*
*ຈ. ຕະຫລອດໄປ ສ. ຈຳກັດ (ບໍ່ມີຂອບເຂດ) ຊ. ດີ*